ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# 10 ປີ ແຫ່ງການພັດທະນາຕະຫຼາດທຶນລາວ




ໃນວັນທີ 30 ຕຸລາ 2020 ທີ່ໂຮງແຮມດອນຈັນ ພາເລດ ຄອນຫຼວງວຽງຈັນ ໄດ້ຈັດຕັ້ງພິທີສະຫຼຸບຜົນງານ 10 ປີ ຕະຫຼາດທຶນລາວ (10/10/2010-10/10/2020) ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ). ພ້ອມນີ້, ກໍ່ມີຄະນະກະກຽມສ້າງຕັ້ງຕະຫຼາດຫຼັກຊັບລາວ; ຄະນະກຳມະການຄຸ້ມຄອງຫຼັກຊັບ; ເອກອັກຄະລັດຖະທູດ ສ.ເກົາຫລີ ປະຈຳ ສປປ ລາວ; ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ ແລະ ພວກສ່ວນກ່ຽວຂ້ອງເຂົ້າຮ່ວມເກືອບ 200 ຄົນ.

ການສະຫຼຸບວຽກງານຂອງຕະຫຼາດທຶນລາວໃນຄັ້ງນີ້ເປັນເຫດການອັນສຳຄັນຍິ່ງ, ເປັນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງຕະຫຼາດການເງິນຂອງ ສປປ ລາວ ໃນການສະໜອງແຫຼ່ງທຶນໄລຍະຍາວໃຫ້ແກ່ພາກສ່ວນເສດຖະກິດ ເພື່ອພັດທະນາ ແລະ ຂະຫຍາຍກິດຈະການທາງດ້ານການຜະລິດ, ການຄ້າ ແລະ ການບໍລິການ ທີ່ໄດ້ສ່ອງແສງໃຫ້ເຫັນເຖິງຄວາມເຕີບໃຫຍ່ຂະຫຍາຍຕົວຂອງຕະຫຼາດທຶນ ສປປ ລາວ ທີ່ມີບາດກ້າວຫັນປ່ຽນທີ່ຕັ້ງໜ້າ ແລະ ກ້າວເດີນຢ່າງໜັກແໜ້ນໄປຄຽງຄູ່ກັບຂະແໜງການອື່ນໆໃນການປະຕິບັດ 2 ໜ້າທີ່ຍຸດທະສາດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕາມແນວທາງປ່ຽນແປງໃໝ່ທີ່ມີຫຼັກການຂອງພັກ.

ໃນຕະຫຼອດໄລຍະ 10 ປີ ຜ່ານມາທ່າມກາງສະພາບການຂອງໂລກມີການຜັນແປຢ່າງສະຫຼັບສັບຊ້ອນ ແລະ ຄາດຄະເນໄດ້ຍາກແຕ່ພາຍໃຕ້ການຊີ້ນຳ-ນຳພາຂອງຄະນະກຳມະການຄຸ້ມຄອງຫຼັກຊັບ, ຄະນະບໍລິຫານຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນລາວບວກກັບຄວາມເປັນເອກະພາບ ແລະ ຄວາມຕັດສິນໃຈສູງໃນການປະຕິບັດໜ້າທີ່ຂອງຖັນແຖວພະນັກງານຂອງສຳນັກງານ ຄຄຊ, ຕະຫຼາດຫຼັກຊັບລາວ (ຕລຊລ), ຜູ້ເຮັດໜ້າທີ່ໃນບໍລິສັດຫຼັກຊັບ ແລະ ໃນຂະແໜງຕະຫຼາດທຶນລາວໂດຍສະເພາະໄດ້ມີການຮ່ວມມືຈາກບັນດາກະຊວງ, ຂະແໜງການ ແລະ ການຊ່ວຍເຫຼືອຈາກທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດ ຈຶ່ງເຮັດໃຫ້ຕະຫຼາດທຶນຂອງ ສປປ ລາວ ສາມາດເຄື່ອນໄຫວໄດ້ຢ່າງຄ່ອງຕົວ ແລະ ສ້າງເງື່ອນໄຂໃຫ້ລັດຖະບານ ແລະ ວິສາຫະກິດ ຂອງ ສປປ ລາວ ສາມາດລະດົມແຫຼ່ງທຶນໄລຍະຍາວໂດຍຜ່ານການອອກຈຳໜ່າຍພັນທະບັດລັດຖະບານ, ອອກຮຸ້ນຢູ່ພາຍໃນປະເທດແລະອອກຮຸ້ນກູ້ຢູ່ຕ່າງປະເທດ ເຊິ່ງສາມາດລະດົມທຶນໄດ້ທັງໝົດ

24.502 ຕື້ກີບກວມເອົາ 15% ຂອງ GDP ເຊິ່ງແຫຼ່ງທຶນດັ່ງກ່າວ ໄດ້ຖືກໝູນໃຊ້ເຂົ້າໃນການຜະລິດທຸລະກິດ ແລະ ການບໍລິການ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ ທັງເປັນກົນໄກສ້າງຄວາມເຂັ້ມແຂງໃຫ້ແກ່ວິສາຫະກິດທີ່ມາລະດົມທຶນຜ່ານຕະຫຼາດທຶນລາວ.







ທ່ານ ສົມດີ ດວງດີ ປະທານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ຮຽກຮ້ອງມາຍັງຜູ້ມີສ່ວນຮ່ວມໃນຕະຫຼາດທຶນລາວ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໂດຍສະເພາະຕະຫຼາດຫຼັກຊັບ ສ.ເກົາຫລີ ຈົ່ງສືບຕໍ່ໃຫ້ການຮ່ວມມື ແລະ ປະກອບສ່ວນພັດທະນາຕະຫຼາດທຶນລາວ ໃຫ້ກາຍເປັນຂໍກຸນແຈໃນການຈັດສັນແຫຼ່ງທຶນທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ ຕາມທີ່ໄດ້ກຳນົດໄວ້ໃນວິໄສທັດການພັດທະນາຕະຫຼາດທຶນລາວ ຮອດປີ 2030.

ໃນພິທີຍັງມີຮ້ານວາງສະແດງຜົນງານ 10 ປີ ຕະຫຼາດທຶນລາວຈາກສຳນັກງານ ຄຄຊ, ຕະຫຼາດຫຼັກຊັບລາວ, ບໍລິສັດຈົດທະບຽນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນລາວ ລວມທັງໝົດ 27 ຮ້ານ. ພ້ອມນີ້ ຍັງມີການສຳມະນາແບບຖາມ-ຕອບ (Panel Discussion) ແລະ ຫຼິ້ນ ເກມໃນຫົວຂໍ້ທີ່ຕິດພັນກັບວຽກງານຕະຫຼາດທຶນລາວ ຊຶ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 300 ຄົນ.

**# ຂ່າວ: ຣັດສະໝີ ດວງສັດຈະ**

**# ພາບ: ສົມອິກ ເຄນຄຳແພງ, ສົມພົດ ທຳມະວົງ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**